# ກອງປະຊຸມ
# ສຳມະນາວຽກງານຂໍ້ມູນຂ່າວສານສິນເຊື່ອ




ໃນວັນທີ 8 ພຶດສະພາ 2023 ບໍລິສັດ ຂໍ້ມູນເຄດິດແຫ່ງຊາດ ຈຳກັດ (ປະເທດໄທ) ນຳໂດຍ ທ່ານ ນາງ ນີຣະວົງ ຊໍ່າຊັບ ຜູ້ຊ່ວຍຜູ້ຈັດການໃຫຍ່ອາວຸໂສ ຝ່າຍການຕະຫຼາດ ແລະ ບໍລິການສະມາຊິກ ບໍລິສັດຂໍ້ມູນເຄດິດແຫ່ງຊາດ ຈຳກັດ (ປະເທດໄທ) ພ້ອມດ້ວຍຄະນະໄດ້ເດີນທາງມາຢ້ຽມຢາມ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ (ຂສລ) ເຊິ່ງໃຫ້ການຕ້ອນຮັບຢ່າງອົບອຸ່ນໂດຍ ທ່ານ ນາລິນ ສີລະວົງສິດ ຮອງຜູ້ອຳນວຍການ ບໍລິສັດ ຂສລ ໃນໂອກາດດັ່ງກ່າວທັງສອງຝ່າຍກໍ່ໄດ້ລາຍງານສະພາບ ໂດຍລວມກ່ຽວກັບການເຄື່ອນໄຫວວຽກງານ ແລະ ການໃຫ້ບໍລິການຂໍ້ມູນຂ່າວສານສິນເຊື່ອ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບັນຫາຕ່າງໆ ເພື່ອເປັນການແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ. ພ້ອມດຽວກັນນັ້ນ, ກໍ່ໄດ້ນຳພາຄະນະຈາກ ບໍລິສັດຂໍ້ມູນເຄດິດແຫ່ງຊາດ ຈຳກັດ (ປະເທດໄທ) ຢ້ຽມຊົມສຳນັກງານຫ້ອງການ ແລະ ການປະຕິບັດວຽກງານຂອງພະນັກງານ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ.


ຂສລ
LCIC
ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ
CREDIT INFORMATION COMP






ຈາກນັ້ນ, ໃນເວລາ 9:00 ໂມງ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລະ ບໍລິສັດ ຂໍ້ມູນເຄດິດແຫ່ງຊາດ ຈຳກັດ (ປະເທດໄທ) ໄດ້ເຂົ້າຮ່ວມກອງປະຊຸມສຳມະນາວຽກງານຂໍ້ມູນຂ່າວສານສິນເຊື່ອ ທີ່ຫ້ອງປະຊຸມຊັ້ນ 7 ຕະຫຼາດຫຼັກຊັບລາວ ໂດຍການເປັນປະທານຮ່ວມລະຫວ່າງ ທ່ານ ນ. ເພັດລຳພອນ ຄ້ານໍເພັດ ຮອງຜູ້ອຳນວຍການ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລະ ທ່ານ ນາງ ນິຣະວົງ ຊ່ຳຊັບ ຜູ້ຊ່ວຍຜູ້ຈັດການໃຫຍ່ອາວຸໂສ ຝ່າຍການຕະຫຼາດ ແລະ ບໍລິການສະມາຊິກ ບໍລິສັດຂໍ້ມູນເຄດິດແຫ່ງຊາດ ຈຳກັດ (ປະເທດໄທ) ແລະ ມີພະນັກງານ, ຜູ້ຮັບຜິດຊອບຈາກ ທະນາຄານແຫ່ງ ສປປ ລາວ, ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລະ ບໍລິສັດ ຂໍ້ມູນເຄດິດແຫ່ງຊາດຈຳກັດ (ປະເທດໄທ) ເຂົ້າຮ່ວມທັງໝົດຈຳນວນ 23 ທ່ານ. ຈຸດປະສົງແມ່ນເພື່ອແລກປ່ຽນບົດຮຽນກ່ຽວກັບ ການບໍລິຫານພາຍໃນ ແລະ ວຽກງານຂໍ້ມູນຂ່າວສານສິນເຊື່ອ ເປັນຕົ້ນແມ່ນ: ການເກັບກຳຂໍ້ມູນຈາກບໍລິສັດສາທາລະນຸປະໂພກຂອງ ສປປ ລາວ ແລະ ການສ້າງຜະລິດຕະພັນຄະແນນສິນເຊື່ອຂອງປະເທດໄທ ເຊິ່ງເປັນຜະລິດຕະພັນທີ່ທັງສອງພາກສ່ວນກຳລັງສຶກສາຄົ້ນຄວ້າ ແລະ ພັດທະນາຢູ່ປະເທດຂອງຕົນເອງໃນປະຈຸບັນ.




ທ່ານ ນ. ເພັດລຳພອນ ຄໍານໍເພັດ ຮອງຜູ້ອຳນວຍການ ບໍລິສັດ ຂສລ ໄດ້ເນັ້ນເຖິງການຈັດກອງປະຊຸມສຳມະນາໃນຄັ້ງນີ້ແມ່ນເພື່ອເປັນການຮ່ວມມືສອງຝ່າຍໃນການຖອດຖອນບົດຮຽນແລກປ່ຽນເຊິ່ງກັນ ແລະ ກັນ ໂດຍສະເພາະການແລກປ່ຽນກ່ຽວກັບການເກັບກໍາຂໍ້ມູນຈາກບໍລິສັດສາທາລະນຸປະໂພກຂອງ ສປປ ລາວ ເຊິ່ງພວກເຮົາເອງກໍ່ມີຄວາມຍິນດີ ແລະ ເປັນກຽດ ທີ່ໄດ້ແລກປ່ຽນບົດຮຽນໃຫ້ແກ່ປະເທດໄທໃນຄັ້ງນີ້. ສໍາລັບບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ພາຍຫຼັງທີ່ໄດ້ສ້າງຕັ້ງໃນທ້າຍປີ 2019 ກໍ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາວຽກງານ, ພາລະບົດບາດ, ສິດ, ໜ້າທີ່ ທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ການມອບໝາຍຂອງຂັ້ນເທິງວາງອອກ. ໃນນັ້ນ, ການເກັບກໍາຂໍ້ມູນຈາກພາກສ່ວນກ່ຽວຂ້ອງ ກໍ່ຄືບັນດາກະຊວງ ແລະ ບໍລິສັດ ສາທາລະນຸປະໂພກ ເພື່ອນໍາໃຊ້ເຂົ້າໃນການປຽບທຽບຂໍ້ມູນໃນຖານຂໍ້ມູນຂ່າວສານສິນເຊື່ອ ແລະ ສ້າງບັນດາຜະລິດຕະພັນ ກໍ່ເປັນສິ່ງໜຶ່ງທີ່ມີຄວາມທ້າທາຍພໍສົມຄວນ ແຕ່ພວກເຮົາກໍ່ໄດ້ສຸມທຸກເຫື່ອແຮງ ແລະ ມີຄວາມພະຍາຍາມໃຫ້ບັນລຸຕາມການມອບໝາຍຂອງລັດຖະບານ ກໍ່ເພື່ອພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ ເພື່ອເປັນຂໍ້ມູນທີ່ສໍາຄັນຊ່ວຍໃຫ້ບັນດາສະຖາບັນການເງິນ ກໍ່ຄືທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ຢູ່ ສປປ ລາວ ໄດ້ນໍາໃຊ້ຂໍ້ມູນທີ່ຖືກຕ້ອງ, ຄົບຖ້ວນ, ຊັດເຈນ, ມີຄຸນນະພາບ ເຂົ້າໃນການພິຈາລະນາໃນການປ່ອຍເງິນກູ້ ແລະ ນໍາໃຊ້ເຂົ້າໃນວຽກງານອື່ນໆທີ່ຈໍາເປັນ ເພື່ອຫຼຸດຜ່ອນຄວາມສ່ຽງຂອງການເກີດໜີ້ທີ່ບໍ່ເກີດດອກອອກຜົນ, ຊ່ວຍຫຼຸດຕົ້ນທຶນໃນການປ່ອຍສິນເຊື່ອ, ຊ່ວຍຫຼຸດຂັ້ນຕອນຂອງການພິຈາລະນາເງິນກູ້ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງ ສປປ ລາວ.



ກອງປະຊຸມຄັ້ງນີ້ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ກໍ່ໄດ້ນຳສະເໜີກ່ຽວກັບພາບລວມ ແລະ ການເກັບກຳຂໍ້ມູນສາທາລະນຸປະໂພກຂອງ ສປປ ລາວ ແລະ ການສ້າງຜະລິດຕະພັນສາທາລະນຸປະໂພກ. ຄຽງຄູ່ກັນນັ້ນ, ບໍລິສັດ ຂໍ້ມູນເຄດິດແຫ່ງຊາດຈຳກັດ (ປະເທດໄທ) ກໍ່ໄດ້ນຳສະເໜີບົດຮຽນກ່ຽວກັບວຽກງານກວດກາພາຍໃນ ແລະ ການສ້າງຜະລິດຕະພັນຄະແນນສິນເຊື່ອສຳລັບບຸກຄົນ ແລະ ບໍລິສັດ ຂອງປະເທດໄທ ເນື່ອງຈາກບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເອງກໍ່ຢູ່ໃນໄລຍະຂອງການທົດລອງນຳໃຊ້ ຜະລິດຕະພັນຄະແນນສິນເຊື່ອບຸກຄົນ ທີ່ໄດ້ປະກາດນຳໃຊ້ແຕ່ກາງປີ 2022 ທີ່ຜ່ານມາ ແລະ ກຳລັງຄົ້ນຄວ້າສ້າງຜະລິດຕະພັນຈັດອັນດັບຄວາມໜ້າເຊື່ອຖືຂອງວິສາຫະກິດ ແລະ ກອງປະຊຸມສຳມະນາໃນຄັ້ງນີ້ ກໍ່ຈະຊ່ວຍໃຫ້ພະນັກງານບໍລິສັດ ຂສລ ໄດ້ຮັບບົດຮຽນເພື່ອເປັນແນວທາງໃນການພັດທະນາວຽກງານຂອງຕົນເອງໃນຕໍ່ໜ້າ.






ກອງປະຊຸມໄດ້ດຳເນີນໄປເປັນເວລາ 01 ວັນເຕັມ ເຊິ່ງຜູ້ເຂົ້າຮ່ວມກໍ່ໄດ້ເອົາໃຈໃສ່ຮັບຟັງ ແລະ ແລກປ່ຽນບົດຮຽນຮ່ວມກັນ ພ້ອມທັງຖາມ-ຕອບ ບັນຫາຕ່າງໆ ເຮັດໃຫ້ສາມາດກຳໄດ້ຫຼາຍບັນຫາທີ່ສຳຄັນທີ່ຕິດພັນກັບວຽກງານຂອງຕົນ ແລະ ກໍ່ເປັນບາດກ້າວທີ່ດີໃນການຮ່ວມມືກັນຂອງສອງປະເທດ ເວົ້າລວມ, ເວົ້າສະເພາະກໍ່ແມ່ນສອງບໍລິສັດ ເຊິ່ງຈະບໍ່ມີພຽງເທົ່ານີ້ ໃນໂອກາດຕໍ່ໄປທັງສອງພາກສ່ວນກໍ່ອາດຈະໄດ້ມີໂອກາດແລກປ່ຽນບົດຮຽນຮ່ວມກັນ ໃນຮູບແບບກັບທີ່ ຫຼື ໃນຮູບແບບອອນລາຍ ຕາມຄວາມເໝາະສົມຕື່ມ ເພື່ອພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອຂອງທັງສອງປະເທດໃຫ້ປະສິດທິພາບ, ພັດທະນາໃຫ້ທຽບເທົ່າສາກົນ ແລະ ອາດຈະກ້າວໄປສູ່ການແລກປ່ຽນຂໍ້ມູນລະຫວ່າງປະເທດໃນອະນາຄົດ.




#ຂ່າວ ແລະ ພາບ: ບໍລິສັດ ຂສລ.